| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາສ້າງຕັ້ງຫໍສະໝຸດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoICT-PD-24 | 04.01.2018 | ກົມພິມຈໍາໜ່າຍ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | R - ສິນລະປະ, ການບັນເທີງ ແລະ ພັກຜ່ອນ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ຮັບປະກັນວ່າ ຫໍສະໝຸດດັ່ງກ່າວ ຕ້ອງໄດ້ມາດຕະຖານ ແລະ ຕ້ອງຮັບປະກັນຄຸ້ມຄອງ ບໍ່ໃຫ້ມີການສວຍໃຊ້ຫໍສະໝຸດ ໃນທາງບໍ່ຖືກຕ້ອງເຊັ່ນ: ບໍ່ນໍາເອົາປຶ້ມ, ສິ່ງພິມອື່ນ ແລະ |

| ຂໍ້ມູນພື້ນຖານ | |
|---|---|
| | ໂສດທັດສະນະວັດຖຸ ທີ່ມີເນື້ອໃນຂັດກັບລະບຽບກົດໝາຍ ຫຼື ຄວາມສະຫງົບ |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງຫໍສະໝຸດ ຊຶ່ງແມ່ນຄັງຄວາມຮູ້ - ສະຖານທີ່ທ້ອນໂຮມ, ເກັບຮັກສາ, ສະສົມປຶ້ມ, ສິ່ງພິມອື່ນ ທີ່ບັນຈຸຄວາມຮູ້ ສະຕິປັນຍາຂອງມວນມະນຸດ ໂດຍມີການຈັດເປັນລະບົບຕາມຫຼັກວິຊາການ ເພື່ອສະໜອງ ແລະ ໃຫ້ການບໍລິການຂໍ້ມູນຂ່າວສານແກ່ມວນຊົນທຸກຊັ້ນຄົນໃນສັງຄົມ, ຍົກເວັ້ນ ຫ້ອງອ່ານ ທີ່ບໍ່ຕ້ອງຂໍອະນຸຍາດ (ຫ້ອງອ່ານ ແມ່ນ ຫ້ອງໃດໜຶ່ງທີ່ຈັດໃນບ່ອນເໝາະສົມ ແລ້ວນຳເອົາປຶ້ມ ຫຼື ສິ່ງພິມອື່ນ ມາຈັດວາງໄວ້ ຊຶ່ງບໍ່ໄດ້ຈັດຕາມລະບົບຫໍສະໝຸດ) |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່?** | ແມ່ນແລ້ວ |
| **ຄຳເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ** | 1. ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອະນຸຍາດສ້າງຕັ້ງ ຫໍສະໝຸດແຫ່ງຊາດ, ຫໍສະໝຸດມະຫາວິທະຍາໄລແຫ່ງຊາດ, ສະຖາບັນ, ວິທະຍາຄານ ແລະ ຫ້ອງສະໝຸດສະເພາະ ທີ່ບໍລິການ ການອ່ານໃຫ້ແກ່ສັງຄົມ 2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ອະນຸຍາດສ້າງຕັ້ງ ຫໍສະໝຸດຂັ້ນແຂວງ, ມະຫາວິທະຍາໄລ, ວິທະຍາໄລ ແລະ ໂຮງຮຽນວິຊາຊີບ 3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ ອະນຸຍາດສ້າງຕັ້ງ ຫໍສະໝຸດຂັ້ນເມືອງ, ຫ້ອງສະໝຸດໂຮງຮຽນສາມັນ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ** | 20 | |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ມີປຶ້ມ, ສິ່ງພິມອື່ນ ແລະ ໂສດທັດສະນະວັດຖຸ ຕາມຄວາມເໝາະສົມແຕ່ລະປະເພດຫໍສະໝຸດ; 2. ມີພື້ນຖານໂຄງລ່າງທີ່ຮັບປະກັນ ເປັນຕົ້ນ ອາຄານ, ສະຖານທີ່ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ; 3. ມີບັນນາຮັກ ຫຼື ພະນັກງານ ທີ່ໄດ້ຜ່ານການຝຶກອົບຮົມວຽກງານຫໍສະໝຸດ; 4. ມີທຶນ ເພື່ອຮັບປະກັນໃຫ້ຫໍສະໝຸດສາມາດເຄື່ອນໄຫວໄດ້ຢ່າງເປັນປົກກະຕິ. | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກຳນົດ ທີ່ໄດ້ກຳນົດໄວ້ ພາຍໃຕ້ກົດໝາຍ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 20000.00 | 10000.00 | 30000.00 |
| ຄໍາເຫັນ | ຕາມທີ່ໄດ້ກໍານົດໄວ້ ໃນລັດຖະບັນຍັດ 03/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ຫໍສະໝຸດ | 012/ສພຊ | 21.12.2011 | ພາກທີ III ການສ້າງຕັ້ງ ແລະ ການຈັດຕັ້ງບໍລິຫານ ຫໍສະໝຸດ ໝວດທີ 1 ການສ້າງຕັ້ງຫໍສະໝຸດ (ມາດຕາ 22 ເຖິງ ມາດຕາ 24) ພາກທີ IV ການຄຸ້ມຄອງ ແລະ |

| **ກົດລະບຽບທີ່ກ່ຽວຂ້ອງ** | | | |
|---|---|---|---|
| | | | ການກວດກາ (ມາດຕາ 40 ຫາມາດຕາ 42) |

| **ເອກະສານປະກອບ** |
|---|
| **ຊື່ເອກະສານ** |
| ໃບຕາດິນ |
| ແຜນຜັງການກໍ່ສ້າງ |

| **ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ)** | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2017 | | |
| 2016 | | |